**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະຖານເອກອັກຄະລັດຖະທູດ
<u>ແຫ່ງ ສປປ ລາວ ທີ່ ບຣູໄນ</u>

ເລກທີ 070 /ສລບຊ.ທກ

## <u>ສະໂນດນຳສົ່ງ</u>

(ທາງແຟກ)

<u>ເຖິງ</u> : ກະຊວງການຕ່າງປະເທດ.
(ກົມການຂ່າວ)

ທີ່ <u>ນະຄອນຫຼວງວຽງຈັນ</u>

<u>ເອກະສານສົ່ງມາພ້ອມນີ້ :</u>

- ຮ່າງບົດອອກຂ່າວ '' ສະຖານທູດລາວ ທີ່ ບຣູໄນ ຈັດສະເຫຼີມສະຫຼອງວັນສະຖາປະນາ ສປປ ລາວ ຄົບຮອບ 36 ປີ ''.......................................................................... 1 ສະບັບ.

<u>ໝາຍເຫດ</u> : ''ເພື່ອພິຈາລະນານຳອອກຂ່າວທາງໜັງສືພິມ ຕາມທາງຄວນດ້ວຍ''

ບຣູໄນ, ວັນທີ 5 ທັນວາ 2011

ບຸນແພງ ຊາຍກັນຍາ
ອັກຄະລັດຖະທູດທີ່ປຶກສາ

ຮ່າງບົດອອກຂ່າວ

## ສະຖານທູດລາວ ທີ່ ບຣຸກແຊນ, ປະເທດ ແບນຊິກ
## ຈັດສະເຫຼີມສະຫຼອງ ວັນສະຖາປະນາ ສປປ ລາວ ຄົບຮອບ 36 ປີ

---

ສະຖານເອກອັກຄະລັດຖະທູດ ແຫ່ງ ສປປ ລາວ ທີ່ ບຣຸກແຊນ, ປະເທດ ແບນຊິກ, ໄດ້ຈັດພິທີສະເຫຼີມສະຫຼອງ ວັນສະຖາປະນາ ສປປ ລາວ ຄົບຮອບ 36 ປີຂຶ້ນ ໃນວັນທີ 3 ທັນວາ 2011 ທີ່ສະຖານທູດລາວ ຢ່າງມີເນື້ອໃນຄວາມໝາຍສຳຄັນ ພາຍໃຕ້ບັນຍາກາດອັນເບີກບານມ່ວນຊື່ນ ແລະ ສະໜິດສະໜົມ ຮ່ວມກັບພີ່ນ້ອງຊາວລາວ ຈຳນວນປະມານ 250 ຄົນ ຈາກປະເທດ ແບນຊິກ, ລຸກຊຳບວກ ແລະ ໂຮນລັງ ທີ່ເຂົ້າຮ່ວມ. ໃນໂອກາດອັນສະຫງ່າລາສີດັ່ງກ່າວ ທ່ານ ສຸທຳ ສາກົນນິຍົມ, ເອກອັກຄະລັດຖະທູດ ໄດ້ຂຶ້ນກ່າວເຖິງປະຫວັດມູນເຊື້ອ ອັນສະຫງ່າອົງອາດຂອງວັນທີ 2 ທັນວາ ພ້ອມດຽວກັນກໍໄດ້ຍົກໃຫ້ເຫັນເຖິງຜົນສຳເລັດອັນສຳຄັນ ທີ່ປວງຊົນຊາວລາວຍາດມາໄດ້ ໃນພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດ ຕະຫຼອດໄລຍະ 36 ປີ ທີ່ຜ່ານມາ, ແນວທາງນະໂຍບາຍຂອງ ພັກ-ລັດ ຕໍ່ພີ່ນ້ອງຊາວລາວ ທີ່ດຳລົງຊີວິດຢູ່ຕ່າງປະເທດ.

ທ່ານ ສຸກສຳລານ ວົງສາລີ, ຕາງໜ້າຊາວລາວ ໄດ້ຂຶ້ນອວຍພອນເຖິງຜູ້ນຳ ພັກ-ລັດ ແຫ່ງ ສປປ ລາວ ແລະ ກ່າວຄຳຕັດສິນໃຈປະກອບສ່ວນ ເຂົ້າໃນການສ້າງສາພັດທະນາ ສປປ ລາວ ຂອງ ຊາວລາວ ທີ່ຕ່າງປະເທດ. ພິທີສຳເລັດລົງດ້ວຍການຮ່ວມງານລ້ຽງອາຫານຄ່ຳສາມັກຄີ, ລາຍການມ່ວນຊື່ນວັນນະຄະດີ ພາຍໃຕ້ບັນຍາກາດອັນອົບອຸ່ນ ແລະ ຮັກແພງສາມັກຄີອັນແທ້ຈິງ ລະຫວ່າງ ພີ່ນ້ອງຊາວລາວ ແລະ ສະຖານທູດ.

ກ່ອນໜ້ານີ້, ສະຖານທູດ ກໍໄດ້ຈັດຕັ້ງຂະບວນການຮ່ຳຮຽນມູນເຊື້ອ 2 ທັນວາ, ຂະບວນການອອກແຮງງານ ຢ່າງເປັນຂະບວນຟົດຟື້ນ ເພື່ອຂຳນັບຮັບຕ້ອນວັນສຳຄັນຂອງຊາດດັ່ງກ່າວ.

---